# ກົດໝາຍ

## ວ່າດ້ວຍສະຖິຕິ

ກະຊວງແຜນການ ແລະການລົງທຶນ

2010

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 60 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ສະຖິຕິ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ສະຖິຕິ ໃນວາລະປະຊຸມຕອນເຊົ້າຂອງວັນທີ 30 ມິຖຸນາ 2010,

## ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ສະຖິຕິ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 30 ມິຖຸນາ 2010

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 161 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20-7-2010

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ສະຖິຕິ.

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;

- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 60/ສພຊ, ລົງວັນທີ 30 ມິຖຸນາ 2010 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ສະຖິຕິ;

- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 14 ກໍລະກົດ 2010.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ສະຖິຕິ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ ເລກທີ 03 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 ມິຖຸນາ 2010

# ກົດໝາຍ
# ວ່າດ້ວຍສະຖິຕິ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍສະຖິຕິ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບ ການຈັດຕັ້ງ, ການຄຸ້ມຄອງ, ການຕິດຕາມ ແລະ ການກວດກາ ການເຄື່ອນໄຫວວຽກງານສະຖິຕິ ໃຫ້ເປັນລະບົບ, ເຂັ້ມແຂງ, ມີປະສິດທິພາບ ແນໃສ່ຮັບປະກັນຂໍ້ມູນສະຖິຕິ ຄົບຖ້ວນ, ຊັດເຈນ, ທັນເວລາ ແລະ ສອດຄ່ອງກັບ ຄວາມເປັນຈິງ ສາມາດເປັນບ່ອນອີງໃຫ້ແກ່ການກຳນົດທິດທາງ ນະໂຍບາຍ, ແຜນພັດທະນາເສດຖະກິດ- ສັງຄົມ, ປະກອບສ່ວນເຂົ້າໃນການສ້າງສາປະເທດຊາດໃຫ້ຮັ່ງມີ, ເຂັ້ມແຂງ, ສີວິໄລ ແລະ ຍຸຕິທຳ.

**ມາດຕາ 2. ສະຖິຕິ**

ສະຖິຕິ ແມ່ນ ຂໍ້ມູນ ຫຼື ຕົວເລກ ທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານ ໂດຍຜ່ານຂະບວນ ການເກັບກຳ, ການສັງລວມ, ການຄິດໄລ່, ການປຸງແຕ່ງ, ການວິໄຈ ແລະ ການວິເຄາະ ຕາມຫຼັກວິທະຍາສາດສະຖິຕິ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ສະຖິຕິທາງການ** ໝາຍເຖິງ ຂໍ້ມູນ ຫຼື ຕົວເລກ ທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານ ໂດຍຜ່ານຂະບວນ ການເກັບກຳ, ການສັງລວມ, ການຄິດໄລ່, ການປຸງແຕ່ງ, ການວິໄຈ ແລະ ການວິເຄາະ ຕາມຫຼັກວິທະຍາສາດສະຖິຕິ ໂດຍໄດ້ຮັບການຮັບຮອງຈາກລະບົບການຈັດຕັ້ງສະຖິຕິແຫ່ງຊາດ;
2. **ສະຖິຕິຂະແໜງການ** ໝາຍເຖິງ ຂໍ້ມູນ ຫຼື ຕົວເລກ ທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານ ໂດຍຜ່ານຂະບວນ ການເກັບກຳ, ການສັງລວມ, ການປຸງແຕ່ງ, ການວິໄຈ ແລະ ການວິເຄາະ ຕາມຫຼັກວິທະຍາສາດສະຖິຕິ ໂດຍກະຊວງ, ອົງການ, ສະຖາບັນຕ່າງໆ ຕາມຄວາມຕ້ອງການຂອງຂະແໜງການຕົນ;
3. **ຄວາມເປັນເອກະລາດທາງດ້ານວິຊາການ** ໝາຍເຖິງ ສິດໃນການຜະລິດ ແລະ ການເຜີຍແຜ່ຂໍ້ມູນສະຖິຕິທາງການ ຕາມຫຼັກວິທະຍາສາດສະຖິຕິ ຢ່າງພາວະວິໄສ ແລະ ເປັນເອກະລາດ;
4. **ການຜະລິດສະຖິຕິ** ໝາຍເຖິງ ການເກັບກຳ, ການສັງລວມ, ການຄິດໄລ່, ການປຸງແຕ່ງ, ການວິໄຈ, ການວິເຄາະ ແລະ ການເຜີຍແຜ່ ຂໍ້ມູນສະຖິຕິ ຈາກການສຳຫຼວດ ແລະ ການລາຍງານບໍລິຫານ ຕາມຫຼັກວິທະຍາສາດສະຖິຕິ;
5. **ການປຸງແຕ່ງສະຖິຕິ** ໝາຍເຖິງ ຂັ້ນຕອນໜຶ່ງຂອງການຜະລິດສະຖິຕິ ກ່ຽວກັບການສຶກສາຄວາມສອດຄ່ອງ ຫຼື ຄວາມເປັນໄປໄດ້ຂອງຂໍ້ມູນ, ການໃສ່ລະຫັດສາລະບານ, ການຈັດລຽງລຳດັບ, ການຈັດໝວດ, ການຈັດກຸ່ມ ຕາມຫຼັກວິທະຍາສາດສະຖິຕິ;
6. **ການສຳຫຼວດສະຖິຕິ** ໝາຍເຖິງ ການເກັບກຳຂໍ້ມູນ ຫຼື ຕົວເລກ ຕາມແບບສອບຖາມ ດ້ວຍການສຳພາດ ຜູ້ສະໜອງຂໍ້ມູນ ແບບທາງກົງ ແລະ ທາງອ້ອມ ຕາມຫຼັກວິທະຍາສາດສະຖິຕິ ແລະ ໄລຍະເວລາທີ່ໄດ້ກຳນົດຢ່າງເປັນເອກະພາບກັນ ໃນແຕ່ລະການສຳຫຼວດ;
7. **ການລາຍງານບໍລິຫານ** ໝາຍເຖິງ ການເກັບກຳຂໍ້ມູນ ຫຼື ຕົວເລກ ໂດຍຜ່ານການລາຍງານຂອງການຈັດຕັ້ງລັດ, ຫົວໜ່ວຍພື້ນຖານ ແລະ ການຈັດຕັ້ງອື່ນ ທີ່ມີການລາຍງານແບບປົກກະຕິ ກ່ຽວກັບການເກັບກຳຂໍ້ມູນສະຖິຕິ ທາງດ້ານເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ແລະ ຄວາມໝັ້ນຄົງ;
8. **ຕົວຊີ້ບອກ** ໝາຍເຖິງ ດັດຊະນີໝາຍ ທີ່ຄິດໄລ່ອອກມາເປັນຕົວເລກສະຖິຕິ ຊຶ່ງສ່ອງແສງເຖິງຂະໜາດ, ລະດັບການຂະຫຍາຍຕົວຂອງການພັດທະນາ, ໂຄງປະກອບ, ອັດຕາສ່ວນພົວພັນທາງດ້ານເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ແລະ ຄວາມໝັ້ນຄົງ ໃນສະຖານທີ່ ແລະ ໄລຍະເວລາໃດໜຶ່ງ;
9. **ຂໍ້ມູນດິບ** ໝາຍເຖິງ ຂໍ້ມູນ ຫຼື ຕົວເລກ ທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານ ທີ່ຍັງບໍ່ທັນໄດ້ຮັບການຜະລິດ ຢ່າງຄົບຊຸດ ຕາມຫຼັກວິທະຍາສາດສະຖິຕິ;
10. **ການຂຶ້ນບັນຊີຫົວໜ່ວຍພື້ນຖານ** ໝາຍເຖິງ ການເກັບກຳສະຖິຕິບັນຊີ ຫົວໜ່ວຍພື້ນຖານທີ່ມີການບັນທຶກຢ່າງເປັນປະຈຳ ແລະ ຕໍ່ເນື່ອງ ໂດຍການຈັດຕັ້ງລັດ, ຫົວໜ່ວຍພື້ນຖານ ແລະ ການຈັດຕັ້ງອື່ນ;
11. **ລະບົບລະຫັດສາລະບານ** ໝາຍເຖິງ ການຈັດແບ່ງຂໍ້ມູນສະຖິຕິອອກເປັນພາກ, ຂະແໜງການ, ໝວດ, ໝູ່, ກຸ່ມ ດ້ວຍການໃສ່ລະຫັດສາລະບານ ເພື່ອນຳໃຊ້ເປັນເອກະພາບໃນການຜະລິດ ແລະ ເຜີຍແຜ່ຂໍ້ມູນສະຖິຕິ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ;

12. **ຫົວໜ່ວຍພື້ນຖານ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງລັດ ແລະ ທີ່ບໍ່ແມ່ນຂອງລັດ ທີ່ດຳເນີນການເຄື່ອນໄຫວທຸລະກິດ, ການຜະລິດ, ການບໍລິການ ແລະ ການເຄື່ອນໄຫວວັດທະນະທຳ-ສັງຄົມ ທີ່ຫວັງຜົນກຳໄລ ແລະ ບໍ່ຫວັງຜົນກຳໄລ;
13. **ນັກເດີນສຳຫຼວດ** ໝາຍເຖິງ ລັດຖະກອນ ຫຼື ບຸກຄົນທີ່ບໍ່ແມ່ນລັດຖະກອນ ຊຶ່ງໄດ້ຮັບມອບໝາຍໃຫ້ເກັບກຳ ແລະ ສັງລວມຂໍ້ມູນ ໃນການດຳເນີນການສຳຫຼວດໃດໜຶ່ງ;
14. **ນັກກວດກາ** ໝາຍເຖິງ ລັດຖະກອນ ຫຼື ບຸກຄົນທີ່ບໍ່ແມ່ນລັດຖະກອນ ຊຶ່ງໄດ້ຮັບມອບໝາຍໃຫ້ກວດກາຂໍ້ມູນ, ຕົວເລກທີ່ນັກເດີນສຳຫຼວດ ເກັບກຳ ແລະ ສັງລວມໄດ້;
15. **ຜູ້ສະໜອງຂໍ້ມູນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຕັ້ງພູມລຳເນົາຢູ່ ສປປ ລາວ ທີ່ໄດ້ສະໜອງຂໍ້ມູນສະຖິຕິ;
16. **ສຳນວນຂໍ້ມູນສະຖິຕິ** ໝາຍເຖິງ ເອກະສານທີ່ມີການບັນທຶກ, ສັງລວມເອົາລາຍລະອຽດ ກ່ຽວກັບການຜະລິດຂໍ້ມູນສະຖິຕິ.

## ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບວຽກງານສະຖິຕິ

ລັດ ສົ່ງເສີມ ວຽກງານສະຖິຕິດ້ວຍການກຳນົດ ນະໂຍບາຍ, ລະບຽບກົດໝາຍ, ລະບົບການຈັດຕັ້ງສະຖິຕິ, ການສ້າງຊັບພະຍາກອນມະນຸດ, ການປະກອບບຸກຄະລາກອນ ແລະ ການສະໜອງງົບປະມານ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນງານສະຖິຕິໃນແຕ່ລະໄລຍະ ແນໃສ່ຮັບປະກັນຄວາມຍືນຍົງ ຂອງວຽກງານສະຖິຕິ.

ລັດ ຊຸກຍູ້ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານສະຖິຕິ ດ້ວຍການສະໜອງຂໍ້ມູນ, ສະຕິປັນຍາ ແລະ ແຫຼ່ງທຶນ.

## ມາດຕາ 5. ຫຼັກການພື້ນຖານຂອງວຽກງານສະຖິຕິ

ວຽກງານສະຖິຕິຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ ຕ້ອງດຳເນີນບົນພື້ນຖານຫຼັກການ ດັ່ງນີ້:

1. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະເປັນເອກະພາບ ໃນຂອບເຂດທົ່ວປະເທດ;
2. ຮັບປະກັນຄວາມຖືກຕ້ອງຕາມຫຼັກວິທະຍາສາດສະຖິຕິ ແລະ ຄວາມເປັນເອກະລາດ ທາງດ້ານວິຊາການໃນການຜະລິດ, ການເຜີຍແຜ່, ການຕອບສະໜອງຂໍ້ມູນສະຖິຕິ ໃຫ້ຖືກຕ້ອງຕາມຄວາມເປັນຈິງ, ພາວະວິໄສ, ຄົບຖ້ວນ, ຊັດເຈນ ແລະ ທັນເວລາ;
3. ຮັບປະກັນຄວາມເປັນເອກະພາບ ຂອງບັນດາຕົວຊີ້ບອກ, ລະບອບວິທີການຄິດໄລ່, ລະບົບຕາຕະລາງເກັບກຳ, ຫົວໜ່ວຍວັດແທກ, ລະບົບລະຫັດສາລະບານ, ໄລຍະເວລາການລາຍງານ ໂດຍໃຫ້ເອົາໃຈໃສ່ສະຖິຕິແຍກເພດ;
4. ຮັບປະກັນ ການເປີດເຜີຍກ່ຽວກັບວິທີການຜະລິດ ແລະ ການເຜີຍແຜ່ຂໍ້ມູນສະຖິຕິ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ນຳໃຊ້ຂໍ້ມູນສະຖິຕິ;

5. ຮັບປະກັນ ສິດສະເໝີພາບ ໃນການເຂົ້າເຖິງ ແລະ ການນຳໃຊ້ຂໍ້ມູນສະຖິຕິ ທີ່ໄດ້ເຜີຍແຜ່ ແລະ ປະກາດໃຊ້, ສາຍພົວພັນລະຫວ່າງຜູ້ຜະລິດ ແລະ ຜູ້ນຳໃຊ້ຂໍ້ມູນສະຖິຕິ.

**ມາດຕາ 6. ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ຄົວເຮືອນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວກິດຈະກຳ ທີ່ກ່ຽວຂ້ອງກັບການຜະລິດ, ການສະໜອງ ແລະ ການນຳໃຊ້ ຂໍ້ມູນສະຖິຕິໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຍົກເວັ້ນການເຜີຍແຜ່, ການສະໜອງຂໍ້ມູນສະຖິຕິ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ.

ກົດໝາຍສະບັບນີ້ ຍັງນຳໃຊ້ສຳລັບຄອບຄົວ ໃນກໍລະນີ ມີການສຳຫຼວດດ້ານສັງຄົມສາດ.

**ມາດຕາ 7. ການຮ່ວມມືສາກົນ**

ລັດ ສົ່ງເສີມໃຫ້ມີການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການເຊື່ອມໂຍງ, ການປະສານງານ ແລກປ່ຽນບົດຮຽນ, ເຂົ້າຮ່ວມກອງປະຊຸມສາກົນ, ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ແລະ ເຕັກໂນໂລຊີ, ຮ່ວມມືຄົ້ນຄວ້າທາງດ້ານວິທະຍາສາດ ແລະ ຍາດແຍ່ງທຶນຮອນ ເພື່ອພັດທະນາວຽກງານສະຖິຕິໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ.

## ພາກທີ II
## ປະເພດສະຖິຕິ

**ມາດຕາ 8. ປະເພດສະຖິຕິ**

ສະຖິຕິ ແບ່ງອອກເປັນ ສີ່ ປະເພດຕົ້ນຕໍ ດັ່ງນີ້:

- ສະຖິຕິເສດຖະກິດ;
- ສະຖິຕິສັງຄົມ;
- ສະຖິຕິສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ;
- ສະຖິຕິຄວາມໝັ້ນຄົງ.

**ມາດຕາ 9. ສະຖິຕິເສດຖະກິດ**

ສະຖິຕິເສດຖະກິດ ແມ່ນ ຂໍ້ມູນສະຖິຕິ ທີ່ສ່ອງແສງເຖິງສະພາບການເຄື່ອນໄຫວຂອງການພັດທະນາເສດຖະກິດ ກ່ຽວກັບການກະສິກຳ, ປ່າໄມ້ ແລະ ການປະມົງ, ອຸດສາຫະກຳ ແລະ ຫັດຖະກຳ, ພະລັງງານ ແລະ ບໍ່ແຮ່, ການຄົມມະນາຄົມ, ໂທລະຄົມມະນາຄົມ ແລະ ໄປສະນີ, ການສື່ສານເຕັກໂນໂລຊີ,

ການກໍ່ສ້າງ, ການຄ້າ, ການລົງທຶນ, ການເງິນ, ເງິນຕາ, ທະນາຄານ ແລະ ການປະກັນໄພ, ການທ່ອງທ່ຽວ, ການຂຶ້ນບັນຊີຫົວໜ່ວຍພື້ນຖານ ແລະ ສະຖິຕິອື່ນ ທີ່ກ່ຽວຂ້ອງກັບເສດຖະກິດ.

**ມາດຕາ 10. ສະຖິຕິສັງຄົມ**

ສະຖິຕິສັງຄົມ ແມ່ນ ຂໍ້ມູນສະຖິຕິ ທີ່ສ່ອງແສງເຖິງສະພາບການເຄື່ອນໄຫວຂອງການພັດທະນາສັງຄົມ ກ່ຽວກັບພົນລະເມືອງ, ຊົນເຜົ່າ, ການສຶກສາ, ສາທາລະນະສຸກ, ແຮງງານ, ສະຫວັດດີການສັງຄົມ, ຖະແຫຼງຂ່າວ ແລະ ວັດທະນະທຳ, ການຂຶ້ນບັນຊີຫົວໜ່ວຍການປົກຄອງ, ຄວາມທຸກຍາກ, ບົດບາດຍິງ-ຊາຍ, ການປະກັນສັງຄົມ, ທີ່ຢູ່ອາໄສ, ກິລາ-ກາຍຍະກຳ, ອົງການຈັດຕັ້ງສັງຄົມ, ອຸປະຕິເຫດ, ຄະດີ ແລະ ສະຖິຕິອື່ນ ທີ່ກ່ຽວຂ້ອງກັບສັງຄົມ.

**ມາດຕາ 11. ສະຖິຕິສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ**

ສະຖິຕິສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ແມ່ນ ຂໍ້ມູນສະຖິຕິ ທີ່ສ່ອງແສງເຖິງສະພາບການເຄື່ອນໄຫວຂອງການພັດທະນາສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ກ່ຽວກັບພູມີປະເທດ, ທໍລະນີສາດ, ອຸຕຸນິຍົມ, ອຸທົກກະສາດ, ໄພພິບັດ, ມົນລະພິດ, ສິ່ງເສດເຫຼືອ ແລະ ການບຳບັດ, ການສ້າງຄວາມສົມດູນ ລະຫວ່າງສິ່ງແວດລ້ອມ, ຊັບພະຍາກອນທຳມະຊາດ, ມະນຸດ ແລະ ການພັດທະນາ ແລະ ສະຖິຕິອື່ນ ທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ.

**ມາດຕາ 12. ສະຖິຕິຄວາມໝັ້ນຄົງ**

ສະຖິຕິຄວາມໝັ້ນຄົງ ແມ່ນ ຂໍ້ມູນສະຖິຕິ ທີ່ສ່ອງແສງເຖິງສະພາບການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ III
## ການສ້າງສະຖິຕິ

**ມາດຕາ 13. ຄວາມສຳຄັນ ແລະຄວາມຈຳເປັນຂອງການສ້າງສະຖິຕິ**

ການສ້າງສະຖິຕິ ແມ່ນ ການຜະລິດສະຖິຕິ ທີ່ເປັນເຄື່ອງມືອັນສຳຄັນໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຄາດໝາຍສູ້ຊົນຂອງແຜນພັດທະນາເສດຖະກິດ-ສັງຄົມ, ເປັນພື້ນຖານອັນຈຳເປັນສຳລັບການສ້າງ ນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນດຳເນີນງານ ແລະ ໂຄງການຕ່າງໆ, ເປັນບໍ່ເກີດແຫ່ງການສະໜອງສະຖິຕິທີ່ຊັດເຈນ ແລະ ທັງເປັນໄມ້ຫຼາວັດແທກລະດັບການເໜັງຕີງທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

**ມາດຕາ 14. ວິທີການໃນການສ້າງສະຖິຕິ**

ການສ້າງສະຖິຕິ ມີ ສອງ ວິທີການ ດັ່ງນີ້:

1. ການສຳຫຼວດ;

2. ການລາຍງານບໍລິຫານ.

## ໝວດທີ 1

## ການສຳຫຼວດ

**ມາດຕາ 15. ປະເພດການສຳຫຼວດສະຖິຕິ**

ການສຳຫຼວດສະຖິຕິ ມີ ສາມ ປະເພດ ດັ່ງນີ້:

- ການສຳຫຼວດໃຫຍ່;
- ການສຳຫຼວດແບບຕົວແທນ;
- ການສຳຫຼວດສະເພາະ.

1. **ການສຳຫຼວດໃຫຍ່** ແມ່ນ ການສຳຫຼວດທີ່ກວມເອົາທຸກຫົວໜ່ວຍເປົ້າໝາຍ ຕາມຈຸດປະສົງຂອງການສຳຫຼວດນັ້ນ ໂດຍບໍ່ມີການນຳໃຊ້ຫຼັກການການຄັດເລືອກຕົວແທນ;
2. **ການສຳຫຼວດແບບຕົວແທນ** ແມ່ນ ການສຳຫຼວດບາງຫົວໜ່ວຍເປົ້າໝາຍທີ່ຜ່ານການຄັດເລືອກຕົວແທນ ຕາມຫຼັກວິທະຍາສາດສະຖິຕິຂອງການອອກແບບຕົວແທນ ຕາມຈຸດປະສົງຂອງການສຳຫຼວດນັ້ນ ຊຶ່ງສາມາດເປັນຕົວແທນລະດັບຊາດ ແລະ ບໍ່ແມ່ນລະດັບຊາດ (ແຂວງ, ເມືອງ ແລະ ບ້ານ);
3. **ການສຳຫຼວດສະເພາະ** ແມ່ນ ການສຳຫຼວດທຸກຫົວໜ່ວຍ ຫຼື ບາງຫົວໜ່ວຍທີ່ເປັນຕົວຢ່າງໃນບາງເຂດ ຕາມຈຸດປະສົງສະເພາະຂອງການສຳຫຼວດ ທີ່ເປັນຕົວແທນ ຫຼື ບໍ່ເປັນຕົວແທນໃຫ້ແກ່ຂົງເຂດທີ່ຖືກສຳຫຼວດ ແລະ ສາມາດຈັດຕັ້ງປະຕິບັດໄດ້ທຸກເວລາ ຕາມຄວາມຕ້ອງການໃນແຕ່ລະໄລຍະທີ່ຈຳເປັນ ໃຫ້ແກ່ການຈັດຕັ້ງສະຖິຕິແຫ່ງຊາດ ຫຼື ຫົວໜ່ວຍພື້ນຖານໃດໜຶ່ງ.

**ມາດຕາ 16. ການວາງແຜນການສຳຫຼວດ**

ການສຳຫຼວດທຸກປະເພດ ຕ້ອງມີແຜນການດຳເນີນງານການສຳຫຼວດ ຊຶ່ງປະກອບດ້ວຍ ສາມຂັ້ນຕອນ ດັ່ງນີ້:

1. ການກະກຽມການສຳຫຼວດ ປະກອບດ້ວຍ ການກຳນົດຈຸດປະສົງ, ເປົ້າໝາຍ, ຂອບເຂດ, ເນື້ອໃນ, ໄລຍະເວລາ, ວັນນັດໝາຍຂອງການສຳຫຼວດ ແລະ ຄາດໝາຍຜົນໄດ້ຮັບ ລວມ

ທັງການກະກຽມເຄື່ອງມື, ວັດຖຸປະກອນ, ບຸກຄະລາກອນ, ງົບປະມານ ແລະ ການໂຄສະນາປຸກລະດົມ ໃຫ້ປະກອບສ່ວນເຂົ້າໃນການສຳຫຼວດ;

2. ການປະຕິບັດພາກສະໜາມ ປະກອບດ້ວຍ ການຝຶກອົບຮົມ ໃຫ້ແກ່ນັກເດີນສຳຫຼວດ ແລະ ນັກກວດກາ, ການດຳເນີນການສຳພາດ ແລະ ການຈົດກ່າຍ ໂດຍນຳໃຊ້ວິທີການສຳພາດໂດຍກົງ ແລະ ທາງອ້ອມ, ການກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຂໍ້ມູນ ທີ່ໄດ້ຮັບຈາກຜູ້ສະໜອງຂໍ້ມູນ;
3. ການປະເມີນຜົນ ປະກອບດ້ວຍ ການສັງລວມ, ການປຸງແຕ່ງ, ການສ້າງຖານຂໍ້ມູນ, ຕາຕະລາງສະຖິຕິ, ບົດລາຍງານ ແລະ ການເຜີຍແຜ່ຜົນຂອງການສຳຫຼວດ.

**ມາດຕາ17. ໄລຍະເວລາການສຳຫຼວດ**

ໄລຍະເວລາການສຳຫຼວດແຕ່ລະປະເພດ ໄດ້ກຳນົດ ດັ່ງນີ້:

1. ການສຳຫຼວດໃຫຍ່ ປະກອບດ້ວຍ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສໃນທົ່ວປະເທດ ແລະ ການສຳຫຼວດການກະສິກຳໃນທົ່ວປະເທດ ຊຶ່ງດຳເນີນໃນທຸກໆ 10 ປີ, ສ່ວນການສຳຫຼວດເສດຖະກິດໃນທົ່ວປະເທດ ແມ່ນດຳເນີນໃນທຸກໆ 5 ປີ ແລະ ການສຳຫຼວດເສດຖະກິດ-ສັງຄົມອື່ນນັ້ນ ແມ່ນດຳເນີນໃນເວລາທີ່ມີຄວາມຈຳເປັນ;
2. ການສຳຫຼວດແບບຕົວແທນລະດັບຊາດ ປະກອບດ້ວຍ ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ, ການສຳຫຼວດແຮງງານ, ການສຳຫຼວດດັດຊະນີໝາຍສັງຄົມ ແມ່ນດຳເນີນໃນທຸກໆ 5 ປີ; ສ່ວນການສຳຫຼວດອື່ນ ແມ່ນປະຕິບັດຕາມແຜນງານ ທີ່ກຳນົດໄວ້ໃນແຜນຍຸດທະສາດ ແລະ ແຜນງານຂອງການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງໃນແຕ່ລະໄລຍະ;
3. ການສຳຫຼວດສະເພາະ ປະກອບດ້ວຍ ການສຳຫຼວດຂະໜາດນ້ອຍ ໂດຍລົງເລິກສະເພາະຂົງເຂດໃດໜຶ່ງທີ່ມີໃນແຜນ ຫຼື ບໍ່ມີໃນແຜນການສຳຫຼວດ ຊຶ່ງສາມາດຈັດຕັ້ງປະຕິບັດໄດ້ທຸກເວລາ ຕາມຄວາມຕ້ອງການເພີ່ມເຕີມ, ຮີບດ່ວນ, ຈຳເປັນ ແລະ ໃນກໍລະນີທີ່ມີເຫດພາວະສຸກເສີນເກີດຂຶ້ນ.

**ມາດຕາ 18. ການອະນຸມັດການສຳຫຼວດ**

ການອະນຸມັດການສຳຫຼວດແຕ່ລະປະເພດ ໃຫ້ປະຕິບັດ ດັ່ງນີ້:

1. ນາຍົກລັດຖະມົນຕີ ເປັນຜູ້ອະນຸມັດ ການສຳຫຼວດໃຫຍ່ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ;
2. ລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ເປັນຜູ້ອະນຸມັດ ການສຳຫຼວດແບບຕົວແທນລະດັບຊາດ ຕາມການສະເໜີຂອງສູນສະຖິຕິແຫ່ງຊາດ ພາຍຫຼັງທີ່ໄດ້ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;

3. ລັດຖະມົນຕີວ່າການກະຊວງ ຫຼື ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ອະນຸມັດ ການສຳຫຼວດແບບຕົວແທນ ລະດັບຂະແໜງການ ທີ່ບໍ່ແມ່ນລະດັບຊາດ ແລະ ການສຳຫຼວດສະເພາະໃນລະດັບແຂວງ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການ ຈາກສູນສະຖິຕິແຫ່ງຊາດ;
4. ສຳລັບການສຳຫຼວດ ທີ່ບໍ່ມີໃນແຜນຍຸດທະສາດຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ ແຕ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ແມ່ນບຸກຄົນທີ່ໄດ້ກ່າວໄວ້ໃນຂໍ້ 1, 2 ແລະ 3 ຂອງມາດຕານີ້ ເປັນຜູ້ອະນຸມັດ ຕາມການສຳຫຼວດແຕ່ລະປະເພດ.

**ມາດຕາ 19. ພາກສ່ວນຈັດຕັ້ງປະຕິບັດການສຳຫຼວດ**

ພາກສ່ວນຈັດຕັ້ງປະຕິບັດການສຳຫຼວດ ແຕ່ລະປະເພດ ມີດັ່ງນີ້:

1. ສູນສະຖິຕິແຫ່ງຊາດ ເປັນຜູ້ຈັດຕັ້ງປະຕິບັດການສຳຫຼວດໃຫຍ່, ການສຳຫຼວດແບບຕົວແທນ ລະດັບຊາດ ແລະ ການສຳຫຼວດສະເພາະ ທີ່ໄດ້ກຳນົດໄວ້ໃນແຜນຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ;
2. ສູນສະຖິຕິປະຈຳ ກະຊວງ, ອົງການ, ແຂວງ, ນະຄອນ ແລະ ເມືອງ, ເທດສະບານ ເປັນຜູ້ດຳເນີນການສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະ ເພື່ອຈຸດປະສົງຮັບໃຊ້ຄວາມຕ້ອງການຂອງຂະແໜງການ ແລະ ທ້ອງຖິ່ນຂອງຕົນ ໂດຍໄດ້ຮັບການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການ ຈາກສູນສະຖິຕິແຫ່ງຊາດ;
3. ຫົວໜ່ວຍພື້ນຖານ ສາມາດດຳເນີນການສຳຫຼວດແບບຕົວແທນ ຫຼື ການສຳຫຼວດສະເພາະ ເພື່ອເປັນຂໍ້ມູນສະຖິຕິ ຮັບໃຊ້ການເຄື່ອນໄຫວວຽກງານຂອງຕົນ ແຕ່ບໍ່ຖືວ່າເປັນສະຖິຕິທາງການ.

ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ສາມາດດຳເນີນການສຳຫຼວດສະຖິຕິໄດ້ ແຕ່ຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການ ຫຼື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

**ມາດຕາ 20. ພັນທະໃນການສະໜອງຂໍ້ມູນໃຫ້ແກ່ການສຳຫຼວດ**

ຄົວເຮືອນ ຫຼື ບຸກຄົນ ແລະ ຫົວໜ່ວຍພື້ນຖານ ມີພັນທະໃນການສະໜອງຂໍ້ມູນໃຫ້ແກ່ການສຳຫຼວດ ດັ່ງນີ້:

1. ຄົວເຮືອນ ຫຼື ບຸກຄົນ ທີ່ດຳລົງຊີວິດໃນ ສປປລາວ ຕ້ອງສະໜອງຂໍ້ມູນ ໃຫ້ນັກເດີນສຳຫຼວດໃນເວລາດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນ ຕາມແຜນງານຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ. ການສະໜອງຂໍ້ມູນໃຫ້ແກ່ການເກັບກຳ ແລະ ການສຳຫຼວດທີ່ບໍ່ໄດ້ດຳ

ເນີນໂດຍການຈັດຕັ້ງສະຖິຕິແຫ່ງຊາດ ແລະ ບໍ່ໄດ້ຮັບການຢັ້ງຢືນຈາກສູນສະຖິຕິແຫ່ງຊາດນັ້ນ ຜູ້ສະໜອງຂໍ້ມູນ ມີສິດຕອບບົນພື້ນຖານຄວາມສະໝັກໃຈ;

2. ຫົວໜ່ວຍພື້ນຖານ ທີ່ດໍາເນີນກິດຈະກໍາ ໃນ ສປປລາວ ຕ້ອງລາຍງານຂໍ້ມູນກ່ຽວກັບການເຄື່ອນໄຫວວຽກງານຂອງຕົນ ຕາມຄວາມຕ້ອງການຂອງການສໍາຫຼວດສະຖິຕິ ໃຫ້ຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ທັນເວລາ ຕາມກໍານົດ ແລະ ຕາມລະບອບການລາຍງານສະຖິຕິ ຂອງການຈັດຕັ້ງສະຖິຕິ ໃນແຕ່ລະໄລຍະ.

ເຈົ້າຂອງ ແລະ ຫົວໜ້າບັນຊີ ຂອງບັນດາຫົວໜ່ວຍພື້ນຖານ ມີພັນທະຮັບຜິດຊອບຕໍ່ຄວາມຖືກຕ້ອງ, ຊັດເຈນ ຂອງການລາຍງານຂໍ້ມູນ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງຂອງ ສປປລາວ.

## ໝວດທີ 2
## ການລາຍງານບໍລິຫານ

### ມາດຕາ 21. ປະເພດການລາຍງານບໍລິຫານ

ການລາຍງານບໍລິຫານ ມີ ສອງ ປະເພດ ດັ່ງນີ້:

- ການລາຍງານສະຖິຕິ ຈາກຫົວໜ່ວຍພື້ນຖານ ການຈັດຕັ້ງຂອງລັດ;
- ການລາຍງານສະຖິຕິຈາກຫົວໜ່ວຍພື້ນຖານ ການຈັດຕັ້ງທີ່ບໍ່ແມ່ນຂອງລັດ.

ການລາຍງານບໍລິຫານ ທັງສອງປະເພດ ແມ່ນ ດໍາເນີນດ້ວຍ ການເກັບກໍາ, ການສັງລວມ ແລະ ການລາຍງານຢ່າງເປັນປົກກະຕິ ຕາມພາລະບົດບາດຂອງຕົນ ໃຫ້ອີງການຄຸ້ມຄອງວຽກງານສະຖິຕິ ແລະ ລະບົບການຈັດຕັ້ງສະຖິຕິແຫ່ງຊາດ ໂດຍນໍາໃຊ້ລະບອບການລາຍງານ ທີ່ໄດ້ກໍານົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້.

### ມາດຕາ 22. ລະບອບການລາຍງານ

ລະບອບການລາຍງານ ແມ່ນ ອີງຕາມຈຸດປະສົງ, ເປົ້າໝາຍ, ຂອບເຂດຂອງການລາຍງານ ຊຶ່ງມີເນື້ອໃນ ດັ່ງນີ້:

- ລະບົບຕາຕະລາງ;
- ຫົວໜ່ວຍວັດແທກ;
- ຫຼັກການ ແລະ ວິທີຄິດໄລ່ຕາມຫຼັກວິທະຍາສາດສະຖິຕິ;
- ລະບົບລະຫັດສາລະບານ;
- ໄລຍະເວລາການລາຍງານສະຖິຕິ;
- ແຫຼ່ງຂໍ້ມູນ.

ການລາຍງານຂໍ້ມູນ ຕ້ອງມີລາຍເຊັນ ແລະ ປະທັບຕາຢັ້ງຢືນຢ່າງເປັນທາງການ ຈາກການຈັດຕັ້ງ ທີ່ລາຍງານຂໍ້ມູນ.

### ມາດຕາ 23. ພັນທະໃນການລາຍງານສະຖິຕິ

ພັນທະຂອງການຈັດຕັ້ງສະຖິຕິແຫ່ງຊາດ ໃນການລາຍງານສະຖິຕິ ມີ ດັ່ງນີ້:

1. ຈຸງານສະຖິຕິປະຈຳບ້ານ ຕ້ອງສ້າງສຳນວນ, ສຳເນົາ ແລະ ລາຍງານຂໍ້ມູນສະຖິຕິ ຕາມລະບອບການລາຍງານ ທີ່ໄດ້ກຳນົດຕາມຕາຕະລາງເກັບກຳ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ ໃຫ້ສູນສະຖິຕິປະຈຳ ເມືອງ, ເທດສະບານ ເພື່ອສັງລວມ ແລະ ລາຍງານ ໃຫ້ການຈັດຕັ້ງສະຖິຕິ ລະບົບສາຍຕັ້ງ ແລະ ສາຍຂວາງ ຢູ່ຂັ້ນແຂວງ ຕາມແຕ່ລະໄລຍະເວລາ ທີ່ກຳນົດໄວ້ຢ່າງເປັນເອກະພາບ ໃນລະບອບການລາຍງານຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ;
2. ສູນສະຖິຕິປະຈຳ ເມືອງ, ເທດສະບານ, ແຂວງ, ນະຄອນ ແລະ ລະບົບການຈັດຕັ້ງຂອງບັນດາຂະແໜງການຢູ່ທ້ອງຖິ່ນ ຕ້ອງສ້າງສຳນວນ, ສຳເນົາ ແລະ ລາຍງານຂໍ້ມູນສະຖິຕິ ຕາມລະບອບການລາຍງານໃຫ້ການຈັດຕັ້ງສະຖິຕິຂັ້ນເທິງຖັດຕົນ ຕາມແຕ່ລະຂັ້ນຢ່າງເປັນເອກະພາບ ໃນແຜນດຳເນີນງານຂອງຕົນ ໃນແຕ່ລະໄລຍະ;
3. ສູນສະຖິຕິປະຈຳ ກະຊວງ, ອົງການ ຕ້ອງລາຍງານຂໍ້ມູນສະຖິຕິໃຫ້ສູນສະຖິຕິແຫ່ງຊາດ ຕາມລະບອບການລາຍງານ ແລະ ຕາມການສະເໜີ ໃນແຕ່ລະໄລຍະ.

ການຈັດຕັ້ງສະຖິຕິ ລະບົບສາຍຕັ້ງ ແລະ ສາຍຂວາງ ທຸກຂັ້ນ ຕ້ອງຮັບຜິດຊອບຕໍ່ຄວາມຖືກຕ້ອງ, ຊັດເຈນຂອງການລາຍງານຂໍ້ມູນສະຖິຕິ ໃຫ້ການຈັດຕັ້ງສະຖິຕິ ຂັ້ນເທິງຖັດຕົນ ແລະ ສູນສະຖິຕິແຫ່ງຊາດ ຕາມລະບຽບກົດໝາຍ.

### ມາດຕາ 24. ປະເພດຄວາມລັບດ້ານສະຖິຕິ

ຄວາມລັບດ້ານສະຖິຕິ ແບ່ງອອກເປັນ ສາມ ປະເພດ ດັ່ງນີ້:

1. ຄວາມລັບຂອງລັດ ກ່ຽວກັບ ຄວາມໝັ້ນຄົງ, ການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ແລະ ຄວາມລັບອື່ນ ທີ່ໄດ້ກຳນົດໄວ້ສະເພາະ;
2. ຄວາມລັບທາງລັດຖະການ ທີ່ມີຄວາມສຳຄັນໃນຂະແໜງການໃດໜຶ່ງ;
3. ຄວາມລັບສະເພາະ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານ.

## ພາກທີ IV
## ການເຜີຍແຜ່ ແລະ ການນຳໃຊ້ຂໍ້ມູນສະຖິຕິ

**ມາດຕາ 25. ຄວາມຮັບຜິດຊອບໃນການຈັດພິມຂໍ້ມູນສະຖິຕິທາງການ**

ພາກສ່ວນຈັດພິມຂໍ້ມູນສະຖິຕິ ຕາມຄວາມຮັບຜິດຊອບຂອງຕົນ ເພື່ອປະກາດໃຊ້ເປັນທາງການ ມີ ດັ່ງນີ້:

1. ສູນສະຖິຕິແຫ່ງຊາດ;
2. ສູນສະຖິຕິປະຈໍາ ສະພາແຫ່ງຊາດ, ກະຊວງ, ອົງການ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ;
3. ສູນສະຖິຕິປະຈໍາ ແຂວງ, ນະຄອນ, ເມືອງ, ເທດສະບານ.

**ມາດຕາ 26. ການປະກາດໃຊ້ ແລະ ການເຜີຍແຜ່ ຂໍ້ມູນສະຖິຕິທາງການ**

ການປະກາດໃຊ້ ແລະ ການເຜີຍແຜ່ ຂໍ້ມູນສະຖິຕິທາງການ ໃຫ້ປະຕິບັດ ດັ່ງນີ້:

1. ສູນສະຖິຕິແຫ່ງຊາດ ເປັນຜູ້ປະກາດໃຊ້ ແລະ ເຜີຍແຜ່ ຂໍ້ມູນສະຖິຕິທາງການ ໃນລະດັບຊາດ ແລະ ຜົນຂອງການສໍາຫຼວດຕ່າງໆ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ;
2. ສູນສະຖິຕິປະຈໍາ ສະພາແຫ່ງຊາດ, ກະຊວງ, ອົງການ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ປະກາດໃຊ້ ແລະ ເຜີຍແຜ່ ຂໍ້ມູນສະຖິຕິທາງການ ໃນລະດັບຂະແໜງການ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງ ທາງດ້ານວິຊາການຂອງສູນສະຖິຕິແຫ່ງຊາດ;
3. ສູນສະຖິຕິປະຈໍາ ແຂວງ, ນະຄອນ, ເມືອງ, ເທດສະບານ ເປັນຜູ້ປະກາດໃຊ້ ແລະ ເຜີຍແຜ່ ຂໍ້ມູນສະຖິຕິທາງການ ໃນລະດັບທ້ອງຖິ່ນ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງ ທາງດ້ານວິຊາການຂອງສູນສະຖິຕິແຫ່ງຊາດ.

ການເຜີຍແຜ່ຂໍ້ມູນສະຖິຕິທາງການ ປະຕິບັດໄດ້ ໂດຍການຈັດຕັ້ງສະຖິຕິແຕ່ລະລະບົບ ດ້ວຍຫຼາຍຮູບແບບ ຊຶ່ງລາຍລະອຽດໄດ້ກໍານົດໄວ້ໃນລະບຽບການເຜີຍແຜ່ຕ່າງຫາກ.

**ມາດຕາ 27. ບຸກຄົນທີ່ມີສິດປະກາດໃຊ້ຜົນຂອງການສໍາຫຼວດ**

ບຸກຄົນທີ່ມີສິດປະກາດໃຊ້ຜົນຂອງການສໍາຫຼວດ ຕາມຄວາມຮັບຜິດຊອບຂອງຕົນ ມີ ດັ່ງນີ້:

1. ຫົວໜ້າສູນສະຖິຕິແຫ່ງຊາດ;
2. ຫົວໜ້າສູນສະຖິຕິປະຈໍາ ສະພາແຫ່ງຊາດ, ກະຊວງ, ອົງການ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ;
3. ຫົວໜ້າສູນສະຖິຕິປະຈໍາ ແຂວງ, ນະຄອນ, ເມືອງ, ເທດສະບານ.

**ມາດຕາ 28. ບຸກຄົນທີ່ມີສິດປະກາດໃຊ້ຜົນຂອງການລາຍງານບໍລິຫານ**

ບຸກຄົນທີ່ມີສິດປະກາດໃຊ້ຜົນຂອງການລາຍງານບໍລິຫານ ຕາມຄວາມຮັບຜິດຊອບຂອງຕົນ ມີດັ່ງນີ້:

1. ຫົວໜ້າສູນສະຖິຕິແຫ່ງຊາດ;
2. ຫົວໜ້າສູນສະຖິຕິປະຈຳ ສະພາແຫ່ງຊາດ, ກະຊວງ, ອົງການ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ;
3. ຫົວໜ້າສູນສະຖິຕິປະຈຳ ແຂວງ, ນະຄອນ, ເມືອງ, ເທດສະບານ.

**ມາດຕາ 29. ການເຂົ້າເຖິງ ແລະການນຳໃຊ້ຂໍ້ມູນສະຖິຕິ**

ການເຂົ້າເຖິງ ແລະ ການນຳໃຊ້ຂໍ້ມູນສະຖິຕິ ໃຫ້ປະຕິບັດຢ່າງສະເໝີພາບກັນ ດັ່ງນີ້:

1. ຜູ້ນຳໃຊ້ຂໍ້ມູນສະຖິຕິ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນສະຖິຕິທາງການ ຕາມທີ່ໄດ້ເຜີຍແຜ່ ແລະ ປະກາດໃຊ້ຈາກລະບົບການຈັດຕັ້ງສະຖິຕິແຫ່ງຊາດ;
2. ຜູ້ນຳໃຊ້ຂໍ້ມູນສະຖິຕິ ທີ່ເປັນຂໍ້ມູນດິບ ຕ້ອງປະຕິບັດຕາມລະບຽບການບໍລິການຂໍ້ມູນ ຂອງການຈັດຕັ້ງສະຖິຕິທີ່ກ່ຽວຂ້ອງ;
3. ຜູ້ນຳໃຊ້ຂໍ້ມູນສະຖິຕິ ຕ້ອງກຳນົດລາຍລະອຽດ ແຫຼ່ງທີ່ມາຂອງຂໍ້ມູນ ໃນເວລານຳໃຊ້ຢ່າງຈະແຈ້ງ.

## ພາກທີ V
## ການຈັດຕັ້ງສະຖິຕິແຫ່ງຊາດ

**ມາດຕາ 30. ລະບົບການຈັດຕັ້ງສະຖິຕິແຫ່ງຊາດ**

ລະບົບການຈັດຕັ້ງສະຖິຕິແຫ່ງຊາດ ປະກອບດ້ວຍ:

1. ການຈັດຕັ້ງສະຖິຕິລະບົບສາຍຕັ້ງ;
2. ການຈັດຕັ້ງສະຖິຕິລະບົບສາຍຂວາງ.

ໃນກໍລະນີທີ່ມີຄວາມຈຳເປັນ ອາດຈະສ້າງຕັ້ງສະພາທີ່ປຶກສາດ້ານສະຖິຕິຂຶ້ນກໍໄດ້ ຕາມການຕົກລົງ ຂອງລັດຖະບານ.

### ໝວດທີ 1
### ການຈັດຕັ້ງສະຖິຕິລະບົບສາຍຕັ້ງ

**ມາດຕາ 31. ການຈັດຕັ້ງສະຖິຕິລະບົບສາຍຕັ້ງ**

ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ປະກອບດ້ວຍ:

- ສູນສະຖິຕິແຫ່ງຊາດ;

- ສູນສະຖິຕິປະຈຳແຂວງ, ນະຄອນ;
- ສູນສະຖິຕິປະຈຳເມືອງ, ເທດສະບານ;
- ຈຸງານສະຖິຕິປະຈຳບ້ານ.

**ມາດຕາ 32. ສິດ ແລະ ໜ້າທີ່ຂອງສູນສະຖິຕິແຫ່ງຊາດ**

ສູນສະຖິຕິແຫ່ງຊາດ ມີຖານະທຽບເທົ່າທະບວງ, ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ.

ສູນສະຖິຕິແຫ່ງຊາດ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ລະບຽບກົດໝາຍ, ສ້າງແຜນຍຸດທະສາດ, ສ້າງແຜນດຳເນີນງານ ແລະ ແຜນງົບປະມານ ກ່ຽວກັບວຽກງານສະຖິຕິ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການປະຕິບັດວຽກງານສະຖິຕິ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ກ່ຽວກັບວຽກງານສະຖິຕິ;
4. ຊີ້ນຳ, ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານ ການຜະລິດ, ການເຜີຍແຜ່ ສະຖິຕິທາງການ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ;
5. ບຳລຸງ, ກໍ່ສ້າງ, ສຶກສາອົບຮົມ ແລະ ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານ ດ້ານ ສະຖິຕິ ໃຫ້ແກ່ລັດຖະກອນ ໃນລະບົບການຈັດຕັ້ງສະຖິຕິແຫ່ງຊາດ ດ້ວຍຫຼາຍຮູບແບບ;
6. ຄົ້ນຄວ້າ ແລະ ສະເໜີ ແຕ່ງຕັ້ງ, ຍົກຍ້າຍໜ້າທີ່ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ສູນສະຖິຕິປະຈຳແຂວງ, ນະຄອນ;
7. ແຕ່ງຕັ້ງ, ຍົກຍ້າຍໜ້າທີ່ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າສູນສະຖິຕິປະຈຳ ເມືອງ, ເທດສະບານ ໂດຍມີການສົມທົບກັບອົງການປົກຄອງທ້ອງຖິ່ນ;
8. ຄົ້ນຄວ້າ ແລະ ສະເໜີ ປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນສະຖິຕິ, ຄົ້ນຄວ້າສະເໜີ ປະຕິບັດນະໂຍບາຍ ຍ້ອງຍໍ ແລະລົງວິໄນ ຕໍ່ພະນັກງານສະຖິຕິ;
9. ຄົ້ນຄວ້າ ແລະ ສະເໜີ ປະຕິບັດນະໂຍບາຍ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການສະໜອງຂໍ້ມູນ ແລະ ປະຕິບັດວິໄນ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ບໍ່ປະຕິບັດຕາມລະບອບການລາຍງານ ແລະ ພັນທະໃນການລາຍງານສະຖິຕິ ຊຶ່ງໄດ້ກຳນົດໄວ້ໃນ ມາດຕາ 22 ແລະ 23 ຂອງກົດໝາຍສະບັບນີ້;
10. ເປັນໃຈກາງປະສານສົມທົບ ກັບຂະແໜງການຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ໃນການຄຸ້ມຄອງ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານສະຖິຕິ;
11. ຕິດຕາມ, ກວດກາ ແລະ ປະເມີນ ກ່ຽວກັບການນຳໃຊ້ຫຼັກວິທະຍາສາດສະຖິຕິ ແລະ ການເຄື່ອນໄຫວວຽກງານສະຖິຕິ ຕາມແຜນຍຸດທະສາດ ແລະ ແຜນດຳເນີນງານຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ;
12. ພົວພັນ, ຮ່ວມມືກັບສາກົນກ່ຽວກັບວຽກງານສະຖິຕິ ຕາມພາລະບົດບາດ, ສິດ, ໜ້າທີ່ຂອງຕົນ ແລະ ຕາມການມອບໝາຍຂອງຂັ້ນເທິງ;

13. ສະຫຼຸບ, ລາຍງານຜົນ ຂອງການຈັດຕັ້ງປະຕິບັດວຽກງານສະຖິຕິ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;
14. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 33. ສິດ ແລະ ໜ້າທີ່ຂອງສູນສະຖິຕິປະຈຳແຂວງ, ນະຄອນ**

ສູນສະຖິຕິປະຈຳແຂວງ, ນະຄອນ ມີຖານະທຽບເທົ່າພະແນກຂອງສູນສະຖິຕິແຫ່ງຊາດ.

ສູນສະຖິຕິປະຈຳແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ເຂົ້າໃນການຈັດຕັ້ງປະຕິບັດຕົວຈິງ ໃນແຂວງ, ນະຄອນ. ສ້າງແຜນການເຄື່ອນໄຫວວຽກງານສະຖິຕິ ໃນຂອບເຂດຄວາມຮັບຜິດຊອບຂອງຕົນໃນແຕ່ລະໄລຍະ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ກ່ຽວກັບວຽກງານສະຖິຕິໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຊີ້ນຳ, ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານ ການຜະລິດ, ການເຜີຍແຜ່ ສະຖິຕິທາງການ ຂອງແຂວງ, ນະຄອນ, ເມືອງ, ເທດສະບານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ເກັບກຳຂໍ້ມູນສະຖິຕິ ຕາມການລາຍງານບໍລິຫານ, ການສຳຫຼວດໃຫຍ່, ການສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະ ໃນຂອບເຂດທ້ອງຖິ່ນຂອງຕົນ; ເຂົ້າຮ່ວມປຶກສາຫາລື, ປະກອບຄຳເຫັນທາງດ້ານວິຊາການກ່ຽວກັບສະຖິຕິ ຕາມຄວາມຮັບຜິດຊອບຂອງຕົນ;
5. ສ້າງຕາຕະລາງເກັບກຳ, ປຶ້ມຄູ່ມື ແລະທວງເອົາຂໍ້ມູນສະຖິຕິ. ສັງລວມ, ປຸງແຕ່ງ, ວິໄຈ, ຈັດພິມ, ເຜີຍແຜ່ ຂໍ້ມູນສະຖິຕິທາງການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ; ຊຸກຍູ້ ສູນສະຖິຕິປະຈຳເມືອງ, ເທດສະບານ ໃນການຈັດຕັ້ງປະຕິບັດວຽກງານສະຖິຕິ ດ້ວຍການນຳໃຊ້ກົນໄກ ແລະ ວິທີການປະສານງານ ທີ່ເໝາະສົມ;
6. ບຳລຸງ, ກໍ່ສ້າງ, ສຶກສາອົບຮົມ ແລະ ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານ ດ້ານສະຖິຕິ ໃຫ້ແກ່ລັດຖະກອນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ຄົ້ນຄວ້າ ແລະ ສະເໜີຕໍ່ສູນສະຖິຕິແຫ່ງຊາດ ແຕ່ງຕັ້ງ, ຍົກຍ້າຍໜ້າທີ່ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ສູນສະຖິຕິ ປະຈຳ ເມືອງ, ເທດສະບານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
8. ແຕ່ງຕັ້ງ ບຸກຄະລາກອນ ຂອງຈຸງານສະຖິຕິປະຈຳບ້ານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍມີການສົມທົບກັບອົງການປົກຄອງທ້ອງຖິ່ນ;

9. ຄົ້ນຄວ້າ ແລະ ສະເໜີ ຕໍ່ສູນສະຖິຕິແຫ່ງຊາດ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນສະຖິຕິ, ຄົ້ນຄວ້າ ສະເໜີ ປະຕິບັດນະໂຍບາຍ ຍ້ອງຍໍ ແລະ ລົງວິໄນ ຕໍ່ພະນັກງານສະຖິຕິ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
10. ຄົ້ນຄວ້າ ແລະ ສະເໜີ ຕໍ່ສູນສະຖິຕິແຫ່ງຊາດ ກ່ຽວກັບການປະຕິບັດນະໂຍບາຍ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການສະໜອງຂໍ້ມູນ ແລະ ປະຕິບັດວິໄນ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ບໍ່ປະຕິບັດຕາມລະບອບການລາຍງານ ແລະ ພັນທະໃນການລາຍງານສະຖິຕິ ຊຶ່ງໄດ້ກໍານົດໄວ້ໃນ ມາດຕາ 22 ແລະ 23 ຂອງກົດໝາຍ ສະບັບນີ້;
11. ພົວພັນ, ຮ່ວມມືກັບສາກົນ ກ່ຽວກັບວຽກງານສະຖິຕິ ຕາມການມອບໝາຍຂອງຂັ້ນເທິງ;
12. ຕິດຕາມ, ກວດກາ ແລະ ປະເມີນ ກ່ຽວກັບການນໍາໃຊ້ຫຼັກວິທະຍາສາດສະຖິຕິ ແລະ ການເຄື່ອນໄຫວວຽກງານສະຖິຕິ ຕາມແຜນດໍາເນີນງານຂອງສູນສະຖິຕິປະຈໍາເມືອງ, ເທດສະບານ ແລະ ຂະແໜງສະຖິຕິປະຈໍາພະແນກການອ້ອມຂ້າງແຂວງ, ນະຄອນ ໃນແຕ່ລະໄລຍະ;
13. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານສະຖິຕິ ໃຫ້ສູນສະຖິຕິແຫ່ງຊາດ, ພະແນກແຜນການ ແລະ ການລົງທຶນ ແລະ ອົງການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;
14. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 34. ສິດ ແລະ ໜ້າທີ່ຂອງສູນສະຖິຕິປະຈໍາເມືອງ, ເທດສະບານ**

ສູນສະຖິຕິ ປະຈໍາ ເມືອງ, ເທດສະບານ ມີຖານະທຽບເທົ່າ ໜ່ວຍງານ ຂອງສູນສະຖິຕິແຫ່ງຊາດ.

ສູນສະຖິຕິ ປະຈໍາ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບກົດໝາຍ, ແຜນດໍາເນີນງານ ກ່ຽວກັບສະຖິຕິ ຢູ່ທ້ອງຖິ່ນຂອງຕົນ;
2. ຈັດຕັ້ງເກັບກໍາ, ທວງເອົາຂໍ້ມູນສະຖິຕິຈາກພາກສ່ວນທີ່ກ່ຽວຂ້ອງ, ສັງລວມ ແລະ ສະໜອງຂໍ້ມູນສະຖິຕິ ໃຫ້ສູນສະຖິຕິປະຈໍາແຂວງ, ນະຄອນ;
3. ເກັບກໍາຂໍ້ມູນສະຖິຕິ ຕາມການສໍາຫຼວດ ແລະ ການລາຍງານບໍລິຫານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ຕິດຕາມ, ກວດກາແລະປະເມີນ ກ່ຽວກັບການນໍາໃຊ້ຫຼັກວິທະຍາສາດສະຖິຕິ ແລະ ການເຄື່ອນໄຫວວຽກງານສະຖິຕິ ຕາມແຜນດໍາເນີນງານຂອງຈຸງານສະຖິຕິປະຈໍາບ້ານ ແລະ ໜ່ວຍງານສະຖິຕິ ປະຈໍາຫ້ອງການຂະແໜງການອ້ອມຂ້າງ ເມືອງ, ເທດສະບານ ໃນແຕ່ລະໄລຍະ;
5. ບໍາລຸງ, ຝຶກອົບຮົມ ດ້ານວິຊາການສະຖິຕິ ໃຫ້ແກ່ລັດຖະກອນ ແລະ ບຸກຄະລາກອນ ຂອງຈຸງານສະຖິຕິ ປະຈໍາບ້ານ ຕາມຄວາມຮັບຜິດຊອບຂອງຕົນ;

6. ຄົ້ນຄວ້າ ແລະ ສະເໜີ ຕໍ່ສູນສະຖິຕິປະຈໍາແຂວງ, ນະຄອນ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ຮັບ ແລະ ສັບຊ້ອນພະນັກງານສະຖິຕິຂອງຕົນ, ສະເໜີ ປະຕິບັດ ນະໂຍບາຍ ແລະ ວິໄນ ຕໍ່ລັດຖະກອນ ແລະ ບຸກຄະລາກອນ ຂອງຈຸງານສະຖິຕິປະຈໍາບ້ານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ຄົ້ນຄວ້າ ແລະ ສະເໜີ ຕໍ່ສູນສະຖິຕິປະຈໍາແຂວງ, ນະຄອນ ກ່ຽວກັບການປະຕິບັດນະໂຍບາຍ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການສະໜອງຂໍ້ມູນ ແລະປະຕິບັດວິໄນ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ບໍ່ປະຕິບັດຕາມລະບອບການລາຍງານ ແລະ ພັນທະໃນການລາຍງານສະຖິຕິ ຊຶ່ງໄດ້ກໍານົດໄວ້ໃນ ມາດຕາ 22 ແລະ23 ຂອງກົດໝາຍສະບັບນີ້;
8. ສະຫຼຸບ ແລະ ລາຍງານສະພາບການຈັດຕັ້ງປະຕິບັດວຽກງານສະຖິຕິ ໃຫ້ສູນສະຖິຕິປະຈໍາແຂວງ, ນະຄອນ, ຫ້ອງການແຜນການ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 35. ສິດ ແລະໜ້າທີ່ຂອງຈຸງານສະຖິຕິ ປະຈໍາບ້ານ**

ຈຸງານສະຖິຕິປະຈໍາບ້ານ ແມ່ນ ພາກສ່ວນໜຶ່ງຂອງອົງການປົກຄອງບ້ານ ທີ່ຂຶ້ນກັບສູນສະຖິຕິປະຈໍາເມືອງ, ເທດສະບານ.

ຈຸງານສະຖິຕິປະຈໍາບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກໍາ ແລະ ສັງລວມ ຂໍ້ມູນສະຖິຕິຈາກຫົວໜ່ວຍພື້ນຖານ ໃນຂອບເຂດບ້ານຂອງຕົນ ໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານ;
2. ເຂົ້າຮ່ວມດໍາເນີນປະຕິບັດການສໍາຫຼວດຕ່າງໆ ຕາມການມອບໝາຍຂອງຂັ້ນເທິງ;
3. ໄດ້ຮັບການບໍາລຸງ ແລະການຝຶກອົບຮົມດ້ານວິຊາການສະຖິຕິ;
4. ສະຫຼຸບ, ລາຍງານສະພາບການຈັດຕັ້ງປະຕິບັດວຽກງານສະຖິຕິ ຕໍ່ສູນສະຖິຕິປະຈໍາເມືອງ, ເທດສະບານ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

## ໝວດທີ 2
## ການຈັດຕັ້ງສະຖິຕິລະບົບສາຍຂວາງ

**ມາດຕາ 36. ການຈັດຕັ້ງສະຖິຕິລະບົບສາຍຂວາງ**

ການຈັດຕັ້ງສະຖິຕິລະບົບສາຍຂວາງ ປະກອບດ້ວຍ:

- ລະບົບການຈັດຕັ້ງຂອງບັນດາຂະແໜງການ ຢູ່ສູນກາງ ແລະ ທ້ອງຖິ່ນ;

- ການຈັດຕັ້ງສະຖິຕິຂອງຫົວໜ່ວຍພື້ນຖານ.

1. ລະບົບການຈັດຕັ້ງຂອງບັນດາຂະແໜງການ ຢູ່ສູນກາງ ແລະ ທ້ອງຖິ່ນ ປະກອບດ້ວຍ:
   - ສູນສະຖິຕິປະຈຳກະຊວງ, ອົງການ;
   - ຂະແໜງສະຖິຕິປະຈຳພະແນກການອ້ອມຂ້າງແຂວງ, ນະຄອນ;
   - ໜ່ວຍງານສະຖິຕິປະຈຳຫ້ອງການຂະແໜງການອ້ອມຂ້າງເມືອງ, ເທດສະບານ.
2. ການຈັດຕັ້ງສະຖິຕິຂອງຫົວໜ່ວຍພື້ນຖານ ມີ ຈຸງານສະຖິຕິຂອງຫົວໜ່ວຍພື້ນຖານ.

**ມາດຕາ 37. ສິດ ແລະ ໜ້າທີ່ຂອງສູນສະຖິຕິປະຈຳ ກະຊວງ, ອົງການ**

ສູນສະຖິຕິປະຈຳ ກະຊວງ, ອົງການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ ແລະ ສ້າງແຜນຍຸດທະສາດການພັດທະນາສະຖິຕິຂອງຂະແໜງການ ດ້ວຍການຜັນຂະຫຍາຍແຜນຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ; ສ້າງແຜນການ, ແຜນດຳເນີນງານ, ແຜນງົບປະມານ ເພື່ອດຳເນີນວຽກງານສະຖິຕິຂອງຂະແໜງການຕົນໃນແຕ່ລະໄລຍະ;
2. ຊີ້ນຳ, ຄຸ້ມຄອງ ແລະຈັດຕັ້ງປະຕິບັດວຽກງານສະຖິຕິຂອງຂະແໜງການຕົນ, ສະໜອງຂໍ້ມູນສະຖິຕິໃຫ້ແກ່ສູນສະຖິຕິແຫ່ງຊາດ ແລະ ຜູ້ນຳໃຊ້ຂໍ້ມູນສະຖິຕິ ຕາມຄວາມຮັບຜິດຊອບຂອງຕົນ;
3. ໂຄສະນາ, ເຜີຍແຜ່ ແລະ ແລກປ່ຽນຂໍ້ມູນສະຖິຕິທາງການກັບຂະແໜງການອື່ນ, ນຳໃຊ້ວິທີການຜະລິດສະຖິຕິ, ລະບອບການລາຍງານ ຕາມຫຼັກວິທະຍາສາດສະຖິຕິ; ປະສານສົມທົບ ກັບສູນສະຖິຕິແຫ່ງຊາດ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສະຖິຕິ;
4. ບຳລຸງ, ກໍ່ສ້າງ ແລະ ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານດ້ານສະຖິຕິ ໃຫ້ແກ່ພະນັກງານສະຖິຕິ ໃນຂະແໜງການຂອງຕົນ ດ້ວຍຫຼາຍຮູບແບບ;
5. ເຂົ້າຮ່ວມປຶກສາຫາລື, ປະກອບຄຳຄິດຄຳເຫັນ, ໃຫ້ຄຳແນະນຳທາງດ້ານວິຊາການກ່ຽວກັບສະຖິຕິ ແລະ ແລກປ່ຽນຂໍ້ມູນ ລະຫວ່າງການຈັດຕັ້ງສະຖິຕິຂອງຂະແໜງການຕ່າງໆ ແຕ່ສູນກາງຮອດທ້ອງຖິ່ນ ເພື່ອຄວາມເປັນເອກະພາບ;
6. ຄົ້ນຄວ້າ ແລະ ສະເໜີ ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ປະຕິບັດວິໄນຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ບໍ່ປະຕິບັດຕາມລະບອບການລາຍງານ ແລະ ພັນທະໃນການລາຍງານສະຖິຕິ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 22 ແລະ 23 ຂອງກົດໝາຍສະບັບນີ້;
7. ຕິດຕາມ, ກວດກາ ແລະ ປະເມີນ ກ່ຽວກັບການນຳໃຊ້ຫຼັກວິທະຍາສາດສະຖິຕິ ແລະ ການເຄື່ອນໄຫວວຽກງານສະຖິຕິ ຕາມແຜນດຳເນີນງານຂອງຂະແໜງສະຖິຕິປະຈຳພະແນກການອ້ອມຂ້າງ ແຂວງ, ນະຄອນ ໃນແຕ່ລະໄລຍະ;
8. ພົວພັນ, ຮ່ວມມືກັບສາກົນ ກ່ຽວກັບວຽກງານສະຖິຕິຕາມການມອບໝາຍຂອງຂັ້ນເທິງ;
9. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານສະຖິຕິ ໃຫ້ກະຊວງ, ອົງການຂອງຕົນ ແລະ ສູນສະຖິຕິແຫ່ງຊາດ ຢ່າງເປັນປົກກະຕິ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 38. ສິດ ແລະ ໜ້າທີ່ຂອງຂະແໜງສະຖິຕິປະຈຳພະແນກການອ້ອມຂ້າງ ແຂວງ, ນະຄອນ**

ຂະແໜງສະຖິຕິປະຈຳພະແນກການອ້ອມຂ້າງ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ ເຂົ້າໃນການຈັດຕັ້ງປະຕິບັດຕົວຈິງ ໃນຂະແໜງການຂອງຕົນ, ສ້າງແຜນການເຄື່ອນໄຫວວຽກງານສະຖິຕິ ໃນຂອບເຂດຄວາມຮັບຜິດຊອບຂອງຕົນໃນແຕ່ລະໄລຍະ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ກ່ຽວກັບວຽກງານສະຖິຕິ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຈັດຕັ້ງປະຕິບັດວຽກງານ ການຜະລິດ, ການເຜີຍແຜ່ ສະຖິຕິທາງການ ຂອງຂະແໜງການຕົນ, ຊີ້ນຳ ແລະ ຄຸ້ມຄອງ ໜ່ວຍງານສະຖິຕິປະຈຳຫ້ອງການຂະແໜງການອ້ອມຂ້າງເມືອງ, ເທດສະບານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ບຳລຸງ, ຝຶກອົບຮົມວິຊາການດ້ານສະຖິຕິ ໃຫ້ແກ່ລັດຖະກອນໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ຄົ້ນຄວ້າ ແລະ ສະເໜີ ກ່ຽວກັບການປະຕິບັດນະໂຍບາຍ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການສະໜອງຂໍ້ມູນ ແລະ ປະຕິບັດວິໄນ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ບໍ່ປະຕິບັດຕາມລະບອບການລາຍງານ ແລະ ພັນທະໃນການລາຍງານສະຖິຕິ ຊຶ່ງໄດ້ກຳນົດໄວ້ໃນ ມາດຕາ 22 ແລະ 23 ຂອງກົດໝາຍສະບັບນີ້;
6. ຕິດຕາມ, ກວດກາ ແລະປະເມີນ ກ່ຽວກັບການນຳໃຊ້ຫຼັກວິທະຍາສາດສະຖິຕິ ແລະ ການເຄື່ອນໄຫວວຽກງານສະຖິຕິ ຕາມແຜນດຳເນີນງານ ຂອງໜ່ວຍງານສະຖິຕິປະຈຳຫ້ອງການຂະແໜງການອ້ອມຂ້າງເມືອງ, ເທດສະບານ ໃນແຕ່ລະໄລຍະ;
7. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານສະຖິຕິ ໃຫ້ສູນສະຖິຕິປະຈຳແຂວງ, ນະຄອນ, ພະແນກການຂອງຕົນ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 39. ສິດ ແລະ ໜ້າທີ່ຂອງໜ່ວຍງານສະຖິຕິປະຈຳຫ້ອງການຂະແໜງການອ້ອມຂ້າງເມືອງ, ເທດສະບານ**

ໜ່ວຍງານສະຖິຕິປະຈຳຫ້ອງການຂະແໜງການອ້ອມຂ້າງເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳ, ທວງເອົາຂໍ້ມູນສະຖິຕິ, ສັງລວມ ແລະ ສະໜອງຂໍ້ມູນສະຖິຕິ ໃຫ້ແກ່ຂະແໜງສະຖິຕິປະຈຳພະແນກການຕົນ;
2. ເຂົ້າຮ່ວມດຳເນີນ ແລະ ປະຕິບັດການສຳຫຼວດຕ່າງໆ ຕາມການຊີ້ນຳຂອງຂະແໜງສະຖິຕິປະຈຳພະແນກການຕົນ;
3. ໄດ້ຮັບການບຳລຸງ ແລະ ການຝຶກອົບຮົມ ດ້ານວິຊາການສະຖິຕິ;
4. ປະສານສົມທົບ ວຽກງານສະຖິຕິ ກັບ ສູນສະຖິຕິປະຈຳເມືອງ, ເທດສະບານ ແລະ ຫົວໜ່ວຍພື້ນຖານທີ່ຕົນຮັບຜິດຊອບ;
5. ສະຫຼຸບ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດວຽກງານສະຖິຕິ ໃຫ້ຫ້ອງການຂະແໜງການຕົນ ແລະ ສູນສະຖິຕິປະຈຳເມືອງ, ເທດສະບານ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 40. ສິດ ແລະ ໜ້າທີ່ຂອງຈຸງານສະຖິຕິຂອງຫົວໜ່ວຍພື້ນຖານ**

ຈຸງານສະຖິຕິຂອງຫົວໜ່ວຍພື້ນຖານ ມີສິດ ແລະ ໜ້າທີ່ ສະໜອງຂໍ້ມູນສະຖິຕິກ່ຽວກັບສະພາບການເຄື່ອນໄຫວຂອງຫົວໜ່ວຍພື້ນຖານຕົນ ຕາມການສຳຫຼວດ ແລະ ການລາຍງານບໍລິຫານ ໃຫ້ແກ່ລະບົບການຈັດຕັ້ງສະຖິຕິແຫ່ງຊາດ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 41. ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ພະນັກງານສະຖິຕິ**

ຫ້າມການຈັດຕັ້ງ ແລະພະນັກງານສະຖິຕິ ມີ ການກະທຳ ດັ່ງນີ້:

1. ເປີດເຜີຍ, ເຜີຍແຜ່ຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້ ຍົກເວັ້ນກໍລະນີໄດ້ຮັບການເຫັນດີຂອງພາກສ່ວນທີ່ກ່ຽວຂ້ອງ;
2. ປອມແປງ, ບິດເບືອນຂໍ້ມູນສະຖິຕິທາງການ ແລະ ຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ສ້າງຄວາມເສຍຫາຍຕໍ່ຜູ້ອື່ນ ໂດຍເຈດຕະນາ;
3. ນຳໃຊ້ຂໍ້ມູນສະຖິຕິ ແລະ ບົດລາຍງານທີ່ໄດ້ຮັບຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການ ຢູ່ ສປປລາວ ເພື່ອໃຊ້ເປັນບ່ອນອີງໃນການກວດກາ ແລະ ການກວດສອບ ການເຄື່ອນໄຫວທຸລະກິດ ຫຼື ເພື່ອການຄິດໄລ່ໃນການເກັບພາສີ ຫຼື ອາກອນ;
4. ລະເມີດຈັນຍາບັນທາງດ້ານສະຖິຕິ ຂອງພະນັກງານ ແລະ ບຸກຄົນ ທີ່ຮັບມອບໝາຍໃຫ້ປະຕິບັດວຽກງານສະຖິຕິ;
5. ມີການກະທຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 42. ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງ ທີ່ສະໜອງຂໍ້ມູນສະຖິຕິ**

ຫ້າມບຸກຄົນ ແລະ ການຈັດຕັ້ງ ທີ່ສະໜອງຂໍ້ມູນສະຖິຕິ ມີ ການກະທຳ ດັ່ງນີ້:

1. ລາຍງານຂໍ້ມູນສະຖິຕິທີ່ບໍ່ມີຄວາມຈິງ;
2. ເຜີຍແຜ່ ແລະ ສະໜອງຂໍ້ມູນທີ່ບໍ່ແມ່ນຄວາມຮັບຜິດຊອບຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;
3. ປອມແປງ, ບິດເບືອນຂໍ້ມູນສະຖິຕິທາງການ ແລະ ຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍເຈດຕະນາ;
4. ນຳໃຊ້ຂໍ້ມູນສະຖິຕິ ແລະ ຈຸດປະສົງອື່ນທີ່ບໍ່ແມ່ນສະຖິຕິ, ນຳໃຊ້ ທີ່ມີຈຸດປະສົງສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ;
5. ມີການກະທຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 43. ຂໍ້ຫ້າມສຳລັບບຸກຄົນ ແລະການຈັດຕັ້ງ ທີ່ນຳໃຊ້ຂໍ້ມູນສະຖິຕິ**

ຫ້າມບຸກຄົນ ແລະການຈັດຕັ້ງ ທີ່ນຳໃຊ້ຂໍ້ມູນ ມີ ການກະທຳ ດັ່ງນີ້:

1. ນຳໃຊ້ຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ ໃນທາງທີ່ບໍ່ຖືກຕ້ອງ ແລະ ເພື່ອຈຸດປະສົງອື່ນທີ່ບໍ່ແມ່ນສະຖິຕິ;
2. ນຳໃຊ້ຂໍ້ມູນສະຖິຕິ ເພື່ອຈຸດປະສົງທຳລາຍການດຳເນີນທຸລະກິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ;
3. ສະໜອງຖານຂໍ້ມູນດິບ ຈາກການສຳຫຼວດ ທີ່ໄດ້ມາຈາກການຈັດຕັ້ງສະຖິຕິທຸກລະບົບ ໃຫ້ບຸກຄົນທີສາມ ເພື່ອຈຸດປະສົງອື່ນ;
4. ບັງຄັບບຸກຄົນໃດໜຶ່ງ ໃຫ້ເປີດເຜີຍ, ລາຍງານ ແລະ ປະກາດໃຊ້ຂໍ້ມູນທີ່ຜິດກັບຄວາມເປັນຈິງ;
5. ມີການກະທຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະການກວດກາ ວຽກງານສະຖິຕິ

### ໝວດທີ 1
### ອົງການຄຸ້ມຄອງວຽກງານສະຖິຕິ

**ມາດຕາ 44. ອົງການຄຸ້ມຄອງວຽກງານສະຖິຕິ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານສະຖິຕິ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງປະສານສົມທົບ ກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສະຖິຕິ ປະກອບດ້ວຍ:

- ກະຊວງແຜນການ ແລະ ການລົງທຶນ;
- ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນ;
- ຫ້ອງການແຜນການ ເມືອງ, ເທດສະບານ;
- ກະຊວງ, ອົງການ, ພະແນກການອ້ອມຂ້າງ ແຂວງ, ນະຄອນ, ຫ້ອງການອ້ອມຂ້າງເມືອງ, ເທດສະບານ.

**ມາດຕາ 45. ສິດ ແລະ ໜ້າທີ່ຂອງກະຊວງແຜນການ ແລະ ການລົງທຶນ**

ໃນການຄຸ້ມຄອງວຽກງານສະຖິຕິ ກະຊວງແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ວາງນະໂຍບາຍ, ທິດທາງ ແຜນຍຸດທະສາດ ແລະ ລະບຽບກົດໝາຍກ່ຽວກັບສະຖິຕິ ເພື່ອສະເໜີໃຫ້ລັດຖະບານພິຈາລະນາ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ ກ່ຽວກັບສະຖິຕິ ໃນຂອບເຂດທົ່ວປະເທດ;
3. ຊີ້ນຳ, ຕິດຕາມ ແລະ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບສະຖິຕິ;
4. ຄົ້ນຄວ້າ ແລະ ສະເໜີແຕ່ງຕັ້ງ, ຍົກຍ້າຍໜ້າທີ່ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າສູນສະຖິຕິແຫ່ງຊາດ;
5. ແຕ່ງຕັ້ງ, ຍົກຍ້າຍໜ້າທີ່ ຫຼື ປົດຕຳແໜ່ງຫົວໜ້າ ແລະ ຮອງຫົວໜ້າ ສູນສະຖິຕິປະຈຳແຂວງ, ນະຄອນ ໂດຍມີການສົມທົບກັບອົງການປົກຄອງທ້ອງຖິ່ນ;
6. ຄົ້ນຄວ້າ ພິຈາລະນາ ຄຳສະເໜີຂອງບຸກຄົນ ແລະ ການຈັດຕັ້ງກ່ຽວກັບການກະທຳ ຫຼື ການຕົກລົງບັນຫາ ທີ່ເປັນການລະເມີດລະບຽບກົດໝາຍ ກ່ຽວກັບວຽກງານສະຖິຕິ;
7. ຄົ້ນຄວ້າ ແລະ ສະເໜີມາດຕະການ, ວິທີການແກ້ໄຂ ການກະທຳທີ່ລະເມີດລະບຽບກົດໝາຍ ໃນການປະຕິບັດວຽກງານສະຖິຕິ ໃຫ້ມີຄວາມໂປ່ງໃສ ແລະ ສອດຄ່ອງກັບລະບຽບກົດໝາຍ;
8. ພົວພັນ ແລະຮ່ວມມື ກັບສາກົນ ກ່ຽວກັບວຽກງານສະຖິຕິ;
9. ສະຫຼຸບ, ສັງລວມ ແລະ ລາຍງານ ການເຄື່ອນໄຫວວຽກງານສະຖິຕິ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງລັດຖະບານ.

**ມາດຕາ 46. ສິດ ແລະ ໜ້າທີ່ຂອງພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານສະຖິຕິ ພະແນກແຜນການ ແລະການລົງທຶນ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍກ່ຽວກັບສະຖິຕິ ລວມທັງ ໂຄສະນາ, ເຜີຍແຜ່ ວຽກງານດັ່ງກ່າວ ໃນຂອບເຂດທ້ອງຖິ່ນຂອງຕົນ;

2. ຊີ້ນຳ, ຕິດຕາມ ແລະ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງພາຍໃນທ້ອງຖິ່ນຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານສະຖິຕິ;
3. ຄົ້ນຄວ້າ ພິຈາລະນາ ຄຳສະເໜີຂອງບຸກຄົນ ແລະ ການຈັດຕັ້ງກ່ຽວກັບການກະທຳ ຫຼື ການຕົກລົງບັນຫາທີ່ເປັນການລະເມີດລະບຽບກົດໝາຍກ່ຽວກັບວຽກງານສະຖິຕິ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ຄົ້ນຄວ້າ ແລະ ສະເໜີມາດຕະການ, ວິທີການແກ້ໄຂ ການກະທຳທີ່ລະເມີດລະບຽບກົດໝາຍ ໃນການປະຕິບັດວຽກງານສະຖິຕິ ໃຫ້ມີຄວາມໂປ່ງໃສ ແລະ ສອດຄ່ອງກັບລະບຽບກົດໝາຍ ຕາມຄວາມຮັບຜິດຊອບຂອງຕົນ;
5. ພົວພັນ ແລະ ຮ່ວມມືກັບສາກົນ ກ່ຽວກັບວຽກງານສະຖິຕິ ຕາມການມອບໝາຍຂອງຂັ້ນເທິງ;
6. ສະຫຼຸບ, ສັງລວມ ແລະ ລາຍງານ ການເຄື່ອນໄຫວວຽກງານສະຖິຕິ ຕໍ່ກະຊວງແຜນການ ແລະ ການລົງທຶນ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 47. ສິດ ແລະ ໜ້າທີ່ຂອງຫ້ອງການແຜນການ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານສະຖິຕິ ຫ້ອງການແຜນການ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ ກ່ຽວກັບສະຖິຕິ ລວມທັງເຜີຍແຜ່ວຽກງານດັ່ງກ່າວໃນທ້ອງຖິ່ນຂອງຕົນ;
2. ຄົ້ນຄວ້າພິຈາລະນາ ຄຳສະເໜີ ຂອງບຸກຄົນ ແລະ ການຈັດຕັ້ງກ່ຽວກັບການກະທຳ ຫຼື ການຕົກລົງບັນຫາ ທີ່ເປັນການລະເມີດລະບຽບກົດໝາຍ ກ່ຽວກັບວຽກງານສະຖິຕິ ຕາມຄວາມຮັບຜິດຊອບຂອງຕົນ;
3. ຄົ້ນຄວ້າ ແລະ ສະເໜີມາດຕະການ, ວິທີການແກ້ໄຂ ການກະທຳທີ່ລະເມີດລະບຽບກົດໝາຍໃນການປະຕິບັດວຽກງານສະຖິຕິ ໃຫ້ມີຄວາມໂປ່ງໃສ ແລະ ສອດຄ່ອງກັບລະບຽບກົດໝາຍຕາມຄວາມຮັບຜິດຊອບຂອງຕົນ;
4. ສະຫຼຸບ, ສັງລວມ ແລະ ລາຍງານການເຄື່ອນໄຫວວຽກງານສະຖິຕິ ໃຫ້ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນ ແລະ ອົງການປົກຄອງເມືອງ, ເທດສະບານຢ່າງເປັນປົກກະຕິ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 48. ສິດ ແລະ ໜ້າທີ່ຂອງກະຊວງ, ອົງການ, ພະແນກການອ້ອມຂ້າງແຂວງ, ນະຄອນ, ຫ້ອງການອ້ອມຂ້າງເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານສະຖິຕິ ກະຊວງ, ອົງການ, ພະແນກການອ້ອມຂ້າງແຂວງ, ນະຄອນ, ຫ້ອງການອ້ອມຂ້າງເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ຊີ້ນໍາ, ຕິດຕາມການປະຕິບັດວຽກງານສະຖິຕິຂອງການຈັດຕັ້ງສະຖິຕິທີ່ຂຶ້ນກັບຕົນ, ພິຈາລະນາແກ້ໄຂ ຄໍາສະເໜີຂອງບຸກຄົນ ແລະ ການຈັດຕັ້ງ ຕາມພາລະບົດບາດຂອງຕົນ ໂດຍປະສານສົມທົບກັບການຈັດຕັ້ງສະຖິຕິລະບົບສາຍຕັ້ງ;
2. ຄົ້ນຄວ້າ ແລະ ສະເໜີມາດຕະການ, ວິທີການແກ້ໄຂ ການກະທໍາທີ່ລະເມີດລະບຽບກົດໝາຍ ໃນການປະຕິບັດວຽກງານສະຖິຕິຂອງຂະແໜງການ ໃຫ້ມີຄວາມໂປ່ງໃສ ແລະ ສອດຄ່ອງກັບລະບຽບກົດໝາຍ ຕາມຄວາມຮັບຜິດຊອບຂອງຕົນ;
3. ສະຫຼຸບ, ສັງລວມ ແລະ ລາຍງານການເຄື່ອນໄຫວວຽກງານສະຖິຕິ ໃຫ້ຂັ້ນເທິງຂອງຕົນ ແລະ ສູນສະຖິຕິແຫ່ງຊາດ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

## ໝວດທີ 2
## ການກວດກາ

### ມາດຕາ 49. ອົງການກວດກາວຽກງານສະຖິຕິ

ອົງການກວດກາວຽກງານສະຖິຕິ ປະກອບດ້ວຍ:

- ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສະຖິຕິ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 44 ຂອງກົດໝາຍສະບັບນີ້;
- ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ອົງການກວດກາລັດ ແລະ ອົງການກວດສອບແຫ່ງລັດ.

### ມາດຕາ 50. ຈຸດປະສົງຂອງການກວດກາ

ຈຸດປະສົງຂອງການກວດກາວຽກງານສະຖິຕິ ແມ່ນ ເພື່ອເຮັດໃຫ້ການຄຸ້ມຄອງການເຄື່ອນໄຫວວຽກງານຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ ມີປະສິດທິພາບ, ປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 51. ເນື້ອໃນການກວດກາ

ເນື້ອໃນການກວດກາ ແມ່ນ ການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແຜນດໍາເນີນງານການເຄື່ອນໄຫວຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ ຕາມລະບຽບກົດໝາຍ.

### ມາດຕາ 52. ແຜນການການກວດກາ

ອົງການກວດກາ ສ້າງແຜນການດໍາເນີນການກວດກາຂອງຕົນຂຶ້ນ ເພື່ອຕິດຕາມ, ກວດກາ ວຽກງານສະຖິຕິ ທີ່ຕິດພັນກັບການປະຕິບັດກິດຈະກໍາ ແລະ ຜົນຜະລິດສະຖິຕິ ທີ່ກໍານົດໄວ້ໃນແຜນດໍາເນີນງານ ແຕ່ລະໄລຍະ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ.

### ມາດຕາ 53. ຮູບການການກວດກາ

ຮູບການການກວດກາ ມີ ສາມ ປະເພດ ດັ່ງນີ້:

- ການກວດກາ ຕາມລະບົບປົກກະຕິ;
- ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
- ການກວດກາ ແບບກະທັນຫັນ.

ການກວດກາ ຕາມລະບົບປົກກະຕິ ແມ່ນ ການກວດກາ ທີ່ມີລັກສະນະກວດກາ ຢ່າງເປັນປະຈຳ ແລະມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍໜຶ່ງເທື່ອຕໍ່ປີ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຮູ້ລ່ວງໜ້າກ່ອນ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາ ແບບກະທັນຫັນ ແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນ ແຕ່ການລົງກວດການັ້ນ ແມ່ນດຳເນີນຢ່າງຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຮູ້ກ່ອນລ່ວງໜ້າ.

ການກວດກາ ໃຫ້ດຳເນີນທັງການກວດກາເອກະສານ ແລະ ການລົງປະຕິບັດຕົວຈິງ ຢູ່ສະຖານທີ່ປະຕິບັດງານ.

### ມາດຕາ 54. ການກວດກາພາຍນອກ

ການກວດກາພາຍນອກ ມີຈຸດປະສົງກວດກາ ການປະຕິບັດໜ້າທີ່ຂອງ ການຈັດຕັ້ງສະຖິຕິທຸກລະບົບ, ອົງການຄຸ້ມຄອງ ແລະ ກວດກາວຽກງານສະຖິຕິ ເພື່ອໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ຍຸຕິທຳ.

ການກວດກາພາຍນອກ ມີ ດັ່ງນີ້:

1. ການກວດກາຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ;
2. ການກວດກາຂອງອົງການກວດກາລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດກາລັດ;
3. ການກວດກາຂອງອົງການກວດສອບແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດສອບແຫ່ງລັດ.

### ມາດຕາ 55. ການລາຍງານ ແລະ ການແກ້ໄຂຜົນຂອງການກວດກາ

ຄະນະກວດກາ ຕ້ອງສ້າງບົດບັນທຶກການກວດກາ, ບົດລາຍງານ ພ້ອມທັງສະເໜີ ວິທີການແກ້ໄຂ ຕໍ່ການລະເມີດ ແລະ ລາຍງານຕໍ່ອົງການທີ່ມີອຳນາດ ພິຈາລະນາ ກ່ຽວກັບຜົນຂອງການກວດກາ.

ຄະນະກວດກາ ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບການສະຫຼຸບລາຍງານຜົນຂອງການກວດກາ ແລະ ຮັກສາຄວາມລັບດ້ານເອກະສານສະຖິຕິ ທີ່ໄດ້ກວດກາຢ່າງເຂັ້ມງວດ.

### ມາດຕາ 56. ສິດ ແລະ ພັນທະຂອງເປົ້າໝາຍທີ່ຖືກກວດກາ

ເປົ້າໝາຍທີ່ຖືກກວດກາ ມີ ສິດ ແລະພັນທະ ດັ່ງນີ້:

1. ຮ້ອງຂໍໃຫ້ຄະນະກວດກາ ນຳສະເໜີ ຂໍ້ຕົກລົງ ກ່ຽວກັບການກວດກາ ແລະ ບັດອະນຸຍາດກວດກາ;
2. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການກວດກາທີ່ບໍ່ຖືກຕ້ອງ ຕາມລະບຽບຫຼັກການ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ;
3. ອຳນວຍຄວາມສະດວກໃນການປະຕິບັດໜ້າທີ່ຂອງຄະນະກວດກາ, ສະໜອງເອກະສານ, ຂໍ້ມູນ, ພະຍານ ຫຼັກຖານ ແລະ ຕອບບັນຫາທີ່ພົວພັນເຖິງເນື້ອໃນການກວດກາ ຕາມການສະເໜີຂອງຄະນະກວດກາ.

## ພາກທີ VIII
## ງົບປະມານ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

### ມາດຕາ 57. ແຫຼ່ງທຶນ

ທຶນໃນການຈັດຕັ້ງປະຕິບັດວຽກງານສະຖິຕິ ແມ່ນ ໄດ້ມາຈາກງົບປະມານແຫ່ງລັດ, ການສະໜັບສະໜູນຊ່ວຍເຫຼືອຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ, ການປະກອບສ່ວນຂອງສັງຄົມ ແລະ ແຫຼ່ງທຶນອື່ນ.

### ມາດຕາ 58. ງົບປະມານ

ງົບປະມານ ຂອງສູນສະຖິຕິແຫ່ງຊາດ ແມ່ນ ຫົວໜ່ວຍງົບປະມານຂັ້ນໜຶ່ງຂອງງົບປະມານແຫ່ງລັດ.

ການຄຸ້ມຄອງ ແລະ ການນຳໃຊ້ງົບປະມານ ຕາມລະບົບສາຍຕັ້ງ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

### ມາດຕາ 59. ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ມີ ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 60. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດວຽກງານສະຖິຕິຄົບຖ້ວນ, ຊັດເຈນ ແລະ ທັນເວລາ ຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 61. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍກ່ຽວກັບວຽກງານສະຖິຕິ ເປັນຕົ້ນ ຂໍ້ຫ້າມຕ່າງໆ ຈະຖືກ ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງຮັບຜິດຊອບໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຕາມລະບຽບກົດໝາຍ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 62. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 63. ຜົນສັກສິດ**

ກົດໝາຍສະບັບນີ້ ມີ ຜົນສັກສິດພາຍຫຼັງ ຫົກສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ